WANotify.org/Lao

# WA NOTIFY ເຮັດວຽກແນວໃດ

Washington Exposure Notifications (ການແຈ້ງເຕືອນຄວາມສ່ຽງ Washington) (WA Notify) ແມ່ນ ເຄື່ອງມືທີ່ສໍາຄັນເພື່ອຊ່ວຍຢຸດການແຜ່ເຊື້ອ COVID-19 ເຊັ່ນດຽວກັນກັບ ການສວມຜ້າປິດປາກ, ການຮັກສາໄລຍະຫ່າງ ແລະ ການສັກວັກຊີນ, WA Notify ແມ່ນວິທີທີ່ດີເລີດໃນການປົກປ້ອງຊຸມຊົນຂອງພວກເຮົາ.

WA Notify ເຮັດວຽກຜ່ານສະມາດໂຟນ, ໂດຍບໍ່ໄດ້ແບ່ງປັນ ຂໍ້ມູນສ່ວນຕົວໃດໜຶ່ງ, ເພື່ອເຕືອນ ຜູ້ໃຊ້ຫາກພວກເຂົາໄດ້ສໍາຜັດກັບພະຍາດ COVID-19. **ມັນເປັນສ່ວນຕົວທັງໝົດ ແລະ ບໍ່ຮູ້ ຫລື ບໍ່ຕິດຕາມທ່ານແມ່ນໃຜ ຫຼື ທ່ານໄປໃສ.**

ການສຶກສາພົບວ່າ ຍິ່ງມີຄົນທີ່ໃຊ້ເຕັກໂນໂລຊີການແຈ້ງເຕືອນກ່ຽວກັບການຕິດເຊື້ອຫຼາຍເທົ່າໃດ, ກໍຍິ່ງມີຜົນປະໂຫຍດຫຼາຍເທົ່ານັ້ນ. ແບບຈໍາລອງຂໍ້ມູນໃນລັດວໍຊິງຕັນ ສະແດງໃຫ້ເຫັນວ່າ ເຖິງຈະມີປະຊາຊົນພຽງຈໍານວນເລັກໜ້ອຍນໍາໃຊ້ WA Notify ເທົ່ານັ້ນກໍຕາມ ຈະສາມາດຊ່ວຍຫຼຸດຜ່ອນການຕິດເຊື້ອ ແລະ ການເສຍຊີວິດລົງໄດ້.

## ເພີ່ມ WA NOTIFY ໄປຍັງໂທລະສັບຂອງທ່ານ

**ໃນ iPhone:**

1. ໄປທີ່ Settings (ການຕັ້ງຄ່າ):
2. ເລື່ອນໄປທີ່ Exposure Notifications (ແຈ້ງເຕືອນກ່ຽວກັບການຕິດເຊື້ອ)
3. ກົດ "Turn On Exposure Notifications (ເປີດນໍາໃຊ້ ແຈ້ງເຕືອນກ່ຽວກັບການຕິດເຊື້ອ)"
4. ເລືອກ United States (ສະຫະລັດ)
5. ເລືອກ Washington

**ໃນໂທລະສັບທີ່ໃຊ້ລະບົບ Android:**

1. ໄປທີ່ Google Play Store
2. ຊອກຫາ WA Exposure Notifications ເພື່ອຊອກຫາແອັບຢ່າງງ່າຍໆ
3. ດາວໂຫຼດແອັບฯ Washington Exposure Notifications (ແຈ້ງເຕືອນກ່ຽວກັບການຕິດເຊື້ອ)

## ເມື່ອທ່ານເພີ່ມ WA NOTIFY ຫາ ໂທລະສັບຂອງທ່ານແລ້ວ

ນີ້ຄືວິທີທີ່ມັນຈະເຮັດວຽກເພື່ອຊ່ວຍປ້ອງກັນການແຜ່ເຊື້ອພະຍາດ COVID-19.

**1**



ເມື່ອຄົນສອງຄົນທີ່ໃຊ້ WA Notify ໃນສະມາດໂຟນຂອງພວກເຂົາຢູ່ໃກ້ກັນ, ໂທລະສັບຂອງພວກເຂົາຈະແລກປ່ຽນລະຫັດແບບສຸ່ມໂດຍໃຊ້ Bluetooth. **ລະຫັດດັ່ງກ່າວແມ່ນບໍ່ເປີດເຜີຍຊື່, ບໍ່ມີການຕິດຕາມທີ່ຕັ້ງ ຫລື ແລກປ່ຽນຂໍ້ມູນສ່ວນຕົວ.**

**2**




ບໍ່ມີຂ່າວໃດທີ່ຈະເປັນຂ່າວດີ. ເມື່ອບາງຄົນໃນ Washington ມີຜົນກວດວ່າຕິດເຊື້ອພະຍາດ COVID-19 ຜ່ານການກວດທີ່ໄດ້ຮັບການຢືນຢັນຈາກຫ້ອງທົດລອງ, ຫ້ອງການສາທາລະນະສຸກ ຈະສົ່ງຂໍ້ຄວາມທີ່ມີລິ້ງເຊື່ອມຕໍ່ໄປຍັງການຢືນຢັນ ແລະ/ຫຼື ການແຈ້ງເຕືອນແບບເດັ້ງຂຶ້ນມາໃຫ້ແກ່ຜູ້ກ່ຽວ. ອີກທາງເລືອກໜຶ່ງ, ຜູ້ໃຊ້ສາມາດຮ້ອງຂໍລະຫັດຢືນຢັນໃຫ້ແກ່ການກວດເອງຢູ່ເຮືອນທີ່ຜົນອອກມາເປັນບວກ.

**3**



ຄົນທີ່ມີຜົນກວດວ່າມີເຊື້ອຈະ **ກົດໃສ່ລິ້ງເຊື່ອມຕໍ່** ຫຼື ແຕະທີ່ການແຈ້ງເຕືອນ ແລະ **ປະຕິບັດຕາມທຸກຂັ້ນຕອນ** ເພື່ອຢືນຢັນຜົນກວດຂອງຜູ້ກ່ຽວໃນ ແອັບ.

**4**



ຜູ້ໃຊ້ WA Notify ຈະໄດ້ຮັບການແຈ້ງເຕືອນວ່າ ພວກເຂົາອາດຈະມີການສໍາຜັດກັບພະຍາດ COVID-19 ຖ້າພວກເຂົາໄດ້ຢູ່ໃກ້ ແລະ ອາດຈະສ່ຽງຕໍ່ການຕິດເຊື້ອຈາກ**ຜູ້ໃຊ້ WA Notify ທີ່ບໍ່ເປີດເຜີຍຊື່ ທີ່ໄດ້ກວດພົບເຊື້ອພະຍາດ COVID-19 ໃນມໍ່ໆມານີ້.**

**5**




ການແຈ້ງເຕືອນມີລິ້ງເຊື່ອມຕໍ່ໄປຍັງຂໍ້ມູນ ກ່ຽວກັບສິ່ງທີ່ຈະເຮັດຖັດໄປເພື່ອປ້ອງກັນທ່ານເອງ ແລະ ຄົນອື່ນ. ພວກມັນບໍ່ປະກອບມີຂໍ້ມູນສ່ວນຕົວໃດໆ ກ່ຽວກັບຜູ້ທີ່ກວດພົບວ່າມີເຊື້ອພະຍາດ ຫລື ສະຖານທີ່ທີ່ອາດຈະມີຄວາມສ່ຽງເກີດຂຶ້ນ.